## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 21 ກໍຣະກະດາ 2024 (07-21-2024)

---

## ອາໂຣນແລະຮູເຣ.

**ຈຸດສຳຄັນໃນບົດຮຽນ:** ຜູ້ນຳບໍ່ໄດ້ນຳພາໂດຍປາສຈາກການຊ່ວຍເຫຼືອຂອງຄົນອື່ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຫຼັງຈາກຈົບເທສນາໃນພາກນະມັສການຮອບເຊົ້າຂອງພວກເຮົາໃນວັນອາທິດມື້ນຶ່ງ, ຂ້າພະເຈົ້າໄດ້ຟ້າວກັບບ້ານເພື່ອໄປຮັບເອົາພັລຍາແລະຫຼານຊາຍສາມຄົນຂອງພວກເຮົາທີ່ໄດ້ໃຊ້ເວລາໃນທ້າຍອາທິດຢູ່ທີ່ຮ້ານຮັນນີ ກແຣມແລະປາປີ (ຄືພັລຍາແລະຂ້າພະເຈົ້າ). ຕໍ່ຄວາມແປກໃຈຂອງຂ້າພະເຈົ້າ, ພວກເດັກຊາຍຍັງບໍ່ພ້ອມເທື່ອ, ພວກເຂົາເຈົ້າຍັງຕ້ອງຖູແຂ້ວ, ກິນເຂົ້າເຊົ້າ, ນຸ່ງເຄື່ອງ, ແລະລ້າງໜ້າ, ເວລາໝົດໄປແລ້ວ, ແລະການເປັນເດັກຊາຍອາຍຸເກົ້າປີ, ເຈັດປີ, ແລະຫ້າປີ, ພວກເຂົາແຍ້ງຊີງແລະດຶງຈ່ອງກັນ, ບໍ່ໄດ້ກ່າວເຖິງການທ່ວງດຶງຈາກເຄື່ອງອຸປະກອນເອເລັກໂຕຣນິກ. ເທົ່າທີ່ຂ້າພະເຈົ້າສາມາດເຮັດໄດ້, ຫວີຜົມຂອງພວກເຂົາ, ລ້າງໜ້າຂອງພວກເຂົາ, ນຸ່ງເຄືອງໃຫ້ແລະໄດ້ຈັດການນຳພວກເຂົາຂຶ້ນລົດ, ບໍ່ດອກ, ຂ້າພະເຈົ້າບໍ່ໄດ້ເຮັດອາຫານເຊົ້າ, ແຕ່ມີຂະໜົມກັມມີແບພຽງພໍ. ແລະຫຼັງຈາກນັ້ນຂ້າພະເຈົ້າໄດ້ຮັບຄຳຕອບ. ພັລຍາຂອງຂ້າພະເຈົ້າແລະຂ້າພະເຈົ້າໄດ້ລ້ຽງລູກຊາຍສີ່ຄົນ, ຂ້າພະເຈົ້າບໍ່ອາດຈຳໄດ້ໃນການກະກຽມພວກເຂົາໃຫ້ພ້ອມເພື່ອຈະໄປໂບດ. ດັ່ງນັ້ນ, ຂ້າພະເຈົ້າໄດ້ຖາມນາງວ່າ, "ເຈົ້າຕ້ອງເຮັດແບບນີ້ກັບລູກທັງສີ່ຄົນບໍ?" "ໃນທຸກໆວັນອາທິດ!" ຄຳຕອບຂອງນາງເປັນສິ່ງທີ່ຂ້າພະເຈົ້າບໍ່ຮູ້ມາກ່ອນ, ພັນລະຍາຂອງຂ້າພະເຈົ້າເປັນແຫຼ່ງທີ່ມາຂອງການໃຫ້ຄວາມຮ່ວມມືຊ່ວຍເຫຼືອທີ່ສຳຄັນທີ່ສຸດ, ໃນສມັຍເລີ່ມຕົ້ນຂອງການຮັບໃຊ້ວຽກງານພຣະເຈົ້າ, ນາງເປັນຫຼາຍກ່ວາເພື່ອນຮ່ວມງານຄົນນຶ່ງ. ພວກເຮົາມັກຈະຄິດຢູ່ສເມີວ່າພວກເຮົາສາມາດຈັດການກັບຊີວິດຕົນເອງໄດ້ໂດຍບໍ່ມີການຊ່ວຍເຫຼືອຂອງຄົນອື່ນ. ແຕ່ໃນເວລາທີ່ຄັບຂັນ, ແມ່ນແຕ່ໂມເຊກໍ່ໄດ້ຄົ້ນພົບວ່າການມີຄອບຄົວແລະໝູ່ເພື່ອນຢູ່ຄຽງຂ້າງລາວນັ້ນສຳຄັນພຽງໃດ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

<u>**ສຶກສາພຣະຄັມພີ**</u>

### 1. ອົບພະຍົບ 17:8-10.

*8. ຊາວອາມາເລັກໄດ້ຍົກທັບມາຕີຊາວອິສຣາເອນທີ່ເຣພີດີມ 9. ໂມເຊຈຶ່ງເວົ້າກັບໂຢຊວຍວ່າ, "ຈົ່ງໂຮມກຳລັງຄົນຂອງເຮົາອອກໄປສູ້ຮົບກັບຊາວອາມາເລັກໃນມື້ອື່ນນີ້ ເຮົາຈະຖືໄມ້ເທົ້າທີ່ພຣະເຈົ້າປະທານໃຫ້ຢືນຢູ່ເທິງຈອມພູ." 10. ໂຢຊວຍໄດ້ເຮັດຕາມໂມເຊສັ່ງ ຄືໄດ້ອອກໄປສູ້ຮົບກັບຊາວອາມາເລັກ ສ່ວນໂມເຊ ອາໂຣນແລະຮູເຣໄດ້ຂຶ້ນໄປເທິງຈອມພູນັ້ນ.*

ໂມເຊເກືອບຈະບໍ່ສາມາດມີເວລາເປັນຂອງລາວເອງ, ແລະປະຊາຊົນຊາວອິສຣາເອນກໍ່ເປັນພາລະໜັກໜ່ວງ. ການຖົກຖຽງກັນຂອງຊາວອິສຣາເອນໄດ້ດັງຂຶ້ນເລື້ອຍໆ, ບໍ່ວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຂົາຈະເຮັດແນວໃດກໍ່ຕາມ, ພວກເຂົາກໍ່ບໍ່ພໍໃຈ. ຫຼັງຈາກການອັສຈັນທີ່ເກີດຂຶ້ນທີ່ທະເລແດງ, ພວກເຂົາກໍ່ຈົ່ມກ່ຽວກັບການບໍ່ມີນ້ຳ (ອົບພະຍົບ 15:24). ພຣະເຈົ້າໄດ້ສນອງໃຫ້ແລະໃນທີ່ສຸດພວກເຂົາກໍ່ມີຄວາມສຸກອັນອຸດົມສົມບູນກັບການມີນ້ຳ, ແຕ່ອີກບໍ່ດົນພວກເຂົາກໍ່ຈົ່ມອີກໃນຄ້າຍພັກຕໍ່ໄປ (ອົບພະຍົບ 16:2), ແລະພຣະເຈົ້າໄດ້ໃຫ້ມານາແລະນົກຂຸ້ມ. ເມື່ອໄປເຖິງເມືອງເຣຟາດີມ, ພວກເຂົາກໍກັບຄືນໄປຈົ່ມວ່າບໍ່ມີນ້ຳຈະດື່ມອີກ, (ອົບພະຍົບ 17:2). ໂດຍວິທີນີ້, ພວກເຮົາສາມາດຮັບຮູ້ຄວາມຮູ້ສຶກເຖິງຄວາມອຸກອັ່ງໃຈພາຍໃນຂອງໂມເຊ. ໃນຄວາມເປັນຈິງ, ປະຊາຊົນພວກເຂົາໄດ້ເວົ້າເຖິງວ່າຢາກຂ່ວາງກ້ອນຫີນໃສ່ລາວໃຫ້ຕາຍ (ຂໍ້ 4). ໃນຂນະທີ່ພວກເຂົາຢູ່ທີ່ເຣຟາດີມຊາວອິສຣາເອນຕ້ອງປະເຊີນໜ້າສູ້ຮົບຄັ້ງທຳອິດຂອງພວກເຂົາກັບສັດຕູພາຍນອກຫຼັງຈາກອອກຈາກປະເທດເອຢິບ. ໂດຍການໄດ້ຜ່ານຜ່າກັບການຂັດແຍ້ງກັບປະຊາຊົນຂອງຕົນເອງ

ແລ້ວແລະໄດ້ເອົາຊະນະຕໍ່ຄວາມອຸກອັ່ງຂອງຕົນເອງແລະຄົນຂອງຕົນແລ້ວ. ຕອນນີ້ໂມເຊຕ້ອງໄດ້ປະເຊີນໜ້າກັບການສູ້ຮົບຈາກພາຍນອກ. ຊາວອາມາເລັກເປັນເຊື້ອສາຍຂອງເອຊາວ (ປະຖົມມະການ 36:21). ດັ່ງນັ້ນພວກເຂົາຈຶ່ງເປັນລູກອ້າຍລູກນ້ອງຂອງຊາວອິສຣາເອນ, ເຊິ່ງເປັນເຊື້ອສາຍຂອງຢາໂຄບ, ນ້ອງຊາຍຂອງເອຊາວ. ພວກເຂົາຈະພິສູດວ່າຈະເປັນຜູ້ປົກຄອງໃນເບື້ອງຂອງອິສຣາເອນ. ແຕ່ເຖິງແມ່ນວ່າຈະມີການທ້າທາຍ, ໂມເຊມີປະຊາຊົນຂອງລາວ, ມີແຜນການ, ແລະກໍາລັງແຫ່ງການອະທິຖານ. ແຜນການຂອງພວກເຮົາຄວນປະກອບດ້ວຍການຮັບຜິດຊອບບາງຢ່າງຕໍ່ຕົວເອງ, ເຊັ່ນດຽວກັບການຊອກຫາຄວາມຊ່ວຍເຫຼືອຈາກຄົນອື່ນ. ເຖິງແມ່ນວ່າໄຊຊະນະສຸດທ້າຍຈະມາຈາກພຣະຜູ້ເປັນເຈົ້າສເມີ, ແຕ່ເຮົາກໍ່ຕ້ອງ "ຕຽມພ້ອມສໍາລັບວັນສູ້ຮົບ" (ສຸພາສິດ 21:31). ໂຢຊວຍຕ້ອງຈັດຕັ້ງປະຊາຊົນ, ຍຸທສາດວິທີການຂອງພວກເຂົາ, ແລະແມ່ນແຕ່ການປະກອບອາວຸດທີ່ເໝາະສົມຂອງປະຊາຊົນ, ແລະລາວຕ້ອງເຮັດມັນດ້ວຍເວລາໜ້ອຍທີ່ສຸດເພາະວ່າໂມເຊໄດ້ໃຫ້ເວລາລາວໜ້ອຍກ່ວາຊາວສີ່ຊົ່ວໂມງເພື່ອໃຫ້ທຸກສິ່ງທຸກຢ່າງຢູ່ໃນສະຖານທີ່ (ອົບພະຍົບ 17:9). ໂມເຊຍັງເຂົ້າໃຈໃນບົດບາດຂອງລາວໃນແຜນການ; ລາວຈະ "ຢືນຢູ່ເທິງພູດ້ວຍໄມ້ຄ້ອນເທົ້າຂອງພຣະເຈົ້າຢູ່ໃນມືຂອງລາວ" (ຂໍ້9). ແຕ່ແມ່ນແຕ່ຜູ້ມີອໍານາດຂອງພຣະເຈົ້າສອງຄົນນີ້ກໍ່ບໍ່ພຽງພໍ, ພຣະເຈົ້າຈະໃຊ້ຄົນອື່ນມາຄຽງຄູ່ກັບໂມເຊແລະໂຢຊວຍ: ອາໂຣນແລະເຮຣູ. ດຽວນີ້, ໂມເຊຮູ້ແລ້ວວ່າຖ້າບໍ່ມີການຊ່ວຍເຫຼືອຈາກພຣະເຈົ້າ, ບໍ່ມີການວາງແຜນຂອງມະນຸດຈະເຮັດວຽກນີ້ໄດ້. ການອະທິຖານແລະການເພິ່ງພາອາສັຍພຣະເຈົ້າຈະເປັນພື້ນຖານຂອງແຜນການຂອງພວກເຮົາ. ແຕ່ໂມເຊຍັງຕ້ອງການຄົນທີ່ຮ່ວມມືຢູ່ໃນທີ່ນັ້ນ. ໃນຖານະເປັນຜູ້ນໍາຂອງຊາວອິສຣາເອນ, ໂມເຊໄດ້ຮຽກຮ້ອງໃຫ້ອາໂຣນແລະຮູເຣຊ່ວຍໃນການຕໍ່ສູ້ກັບຊາວອາມາເລັກ. ນີ້ແມ່ນຄັ້ງທໍາອິດທີ່ຮູເຣຖືກກ່າວມາໃນຕົວຈິງໃນພຣະຄັມພີ. ທີ່ກໍານົດໂດຍໂຢຊີຟັສ, ນັກປວັດສາດຊາວຢິວ, ຮູເຣເປັນຜົວຂອງມີຣີອາມແລະເປັນອ້າຍເຂີຍຂອງໂມເຊ, ອາໂຣນເປັນອ້າຍຂອງໂມເຊແລະເປັນເພື່ອນຢູ່ສເມີ. ນີ້ຄືກຸ່ມໂມເຊໄດ້ປະກອບເຂົ້າກັນໃນການສູ້ຮົບນີ້! ທະຫານຢູ່ໃນສນາມ, ຜູ້ສນັບສນູນຢູ່ຄຽງຂ້າງລາວ, ແລະຣິດອໍານາດຂອງພຣະເຈົ້າເຝົ້າເບິ່ງພວກເຂົາແລະນໍາພວກເຂົາໄປສູ່ຄວາມສໍາເຣັດ. ເຫດການໃນພຣະຄັມພີນີ້ສະແດງໃຫ້ເຫັນເຖິງຄວາມສໍາຄັນຂອງຜູ້ນໍາທີ່ຈະມຸ້ງເນັ້ນໃສ່ວຽກທີ່ທັນເວລາໃນເວລາທີ່ຊອກຫາເວລາທີ່ຫຍຸ້ງຍາກ. ຜູ້ນໍາບໍ່ສາມາດແກ້ໄຂບັນຫາຂອງພວກເຂົາຢ່າງດຽວ. ພວກເຂົາຍັງຕ້ອງການມີທີມງານສນັບສນູນທີ່ຈະຢູ່ກັບພວກເຂົາໃນເວລາທີ່ພວກເຂົາປະເຊີນກັບສະຖານະການທີ່ຫຍຸ້ງຍາກ. ແນ່ນອນວ່າໂມເຊບໍ່ໄດ້ຢູ່ຄົນດຽວ. ໂຢຊວຍຈະຢູ່ສນາມຮົບກັບປະຊາຊົນອິສຣາເອນ, ແຕ່ອາໂຣນແລະຮຸເຣຈະຢູ່ຄຽງຂ້າງໂມເຊ. ຈະເປັນແນວໃດຖ້າທ່ານບໍ່ແມ່ນຜູ້ນໍາ? ຊອກຫາໂອກາດທີ່ຈະເຂົ້າຮ່ວມກັບຜູ້ທີ່ພຣະເຈົ້າໄດ້ໄວ້ວາງໃນການເປັນຜູ້ນໍາຂອງທ່ານ. ກ່ອນທີ່ຈະມີສິ່ງໃດແດ່ທີ່ຕ້ອງເຮັດ, ມີພຣະປະສົງຂອງພຣະເຈົ້າ, ພຽງແຕ່ຮູ້ວ່າພວກເຂົາມີຄົນອື່ນເຕັມໃຈທີ່ຈະຊ່ວຍເຫຼືອຈະເຮັດໃຫ້ຜູ້ນໍາມີຄວາມກ້າຫານເມື່ອພວກເຂົາສແວງຫາພຣະເຈົ້າສໍາລັບແຜນການຂອງພຣະອົງ.

## 2. ອົບພະຍົບ 17:11-13.

*11. ເມື່ອໃດໂມເຊຍົກແຂນຂຶ້ນ ຊາວອິສຣາເອນກໍເປັນຝ່າຍໄດ້ປຽບ ແຕ່ພໍໂມເຊເອົາແຂນລົງ ຝ່າຍອາມາເລັກກໍເລີ້ມໄດ້ປຽບ. 12. ເມື່ອໂມເຊເມື່ອຍແຂນອາໂຣນກັບຮູເຣກໍນໍາກ້ອນຫີນມາໃຫ້ໂມເຊນັ່ງ ແລ້ວເຂົາທັງສອງກໍຢືນຈັບແຂນໂມເຊຍົກຂຶ້ນຄົນລະຂ້າງ ແຂນຂອງໂມເຊຈຶ່ງຍົກຢູ່ຈົນຕາເວັນຕົກ. 13. ໂຢຊວຍກໍຊະນະຊາວອາມາເລັກໄດ້ທັງໝົດ."*

ໃນຕອນທ້າຍຂອງທຸກໆຮູບເງົາ, ຊື່ສຽງຕົວລະຄອນ, ສະແດງຊື່ທັງໝົດຂອງຄົນຜູ້ສ້າງຮູບເງົາ. ແນ່ນອນ, ຊື່ສຽງຂອງດາຣາແມ່ນເປັນອັນດັບທໍາອິດ. ຕິດຕາມດ້ວຍນັກສະແດງປະກອບ. ທຸກໆຄົນ, ລວມທັງຜູ້ທີ່ເຮັດວຽກຢູ່ໃນເບື້ອງຫຼັງ, ແມ່ນລວມຢູ່, ໃນທາງທີ່ຄ້າຍຄືກັນ, ມັນໃຊ້ເວລາຫຼາຍກ່ວາເວທີທີ່ຜູ້ຄົນຈະນໍາເອົາແຜນການຂອງພຣະເຈົ້າມາເຮັດໃຫ້ເກີດຜົນ. ພວກເຮົາສາມາດໃຫ້ການສນັບສນູນຜູ້ນໍາທີ່ພວກເຂົາຕ້ອງການແນວໃດເພື່ອຮັບປະກັນວ່າທຸກຄົນສາມາດມີປະສົບການກັບໄຊຊະນະໄດ້? ຂໍ້ນີ້ເຮັດໃຫ້ເຮົາເປັນຕົວຢ່າງອັນຍິ່ງໃຫຍ່. ເປັນພາບທີ່ມີພະລັງຂອງການເຮັດວຽກເປັນທີມທີ່ແຕ່ລະຄົນເຮັດໃນສ່ວນຮັບຜິດຊອບຂອງຕົວເອງ, ໂຢຊວຍໄດ້ຕໍ່ສູ້ໃນຮ່ອມພູ, ແຕ່ໂຢຊວຍບໍ່ໄດ້ຕໍ່ສູ້ລໍາພັງຄົນດຽວ; ລາວມີທະຫານທີ່ກ້າຫານຢູ່ຄຽງຂ້າງລາວ. ໂມເຊຢືນຢູ່ເທິງເນີນພູບັນຊາກອງທະຫານເຂົ້າສູ້ຮົບ, ແຕ່ໂມເຊບໍ່ໄດ້ຢູ່ຄົນດຽວ, ລາວມີອາໂຣນແລະຮູເຣຢູ່ຄຽງຂ້າງ. ອາໂຣນແລະຮູເຣມີສ່ວນສໍາຄັນໃນແຜນການຂອງພຣະເຈົ້າ, ເຖິງແມ່ນ

ວ່າພວກເຂົາບໍ່ແມ່ນ "ດາຣາ" ຂອງການສະແດງ. ສລຸບວ່າການສູ້ຮົບນັ້ນຂຶ້ນກັບການຍົກມືຂຶ້ນຂອງໂມເຊ, ອາໂຣນແລະຮູເຣແນ່ໃຈວ່າລາວຈະສາມາດນຳພາພວກເຂົາໃຫ້ຢູ່ໃນຕຳແໜ່ງນັ້ນ. ໃນພຣະຄັມພີ, ສັນຍາລັກຂອງການຍົກມືປາກົດຂຶ້ນໃຫ້ເຫັນເລື້ອຍໆໃນການອະທິຖານຫາພຣະເຈົ້າ (ກົດລະບຽບເລວີ 9:22; ເພງສັຣເສີນ 63:4; 1 ຕີໂມທຽວ 2:8). ແຂນຂອງໂມເຊເມື່ອຍຫຼາຍຈົນບໍ່ສາມາດຍົກມັນຂຶ້ນໄດ້. ຕາບໃດທີ່ໂມເຊຍົກມືຂຶ້ນ, ອິສຣາເອນໄດ້ໄຊຊະນະ, ແຕ່ເມື່ອໂມເຊຫຼຸດແຂນລົງ, ຊາວອາມາເລັກກໍເລີ່ມຊະນະການສູ້ຮົບ. ບາງສິ່ງບາງຢ່າງຈະຕ້ອງປ່ຽນແປງຖ້າຊາວອິສຣາເອນຈະຊະນະໃນມື້ນັ້ນ. ອາໂຣນແລະຮູເຣໄດ້ເຮັດຫຼາຍຢ່າງເພື່ອຊ່ວຍໂມເຊ, <u>ອັນທີໜຶ່ງ</u>, ພວກເຂົາຮັບຮູ້ວ່າໂມເຊອິດເມື່ອຍ. ນີ້ບໍ່ແມ່ນການສະແດງ, ບໍ່ວ່າມັນຈະປາກົດຢູ່ໃນໃບໜ້າຂອງລາວ, ບໍ່ວ່າລາວເວົ້າດ້ວຍສຽງຫາຍໃຈ, ຫຼືວ່າພວກເຂົາພຽງແຕ່ເຫັນແຂນຂອງລາວລົດລົງມາ, ອາໂຣນແລະຮູເຣສັງເກດເຫັນຄວາມເມື່ອຍລ້າແລະໃຫ້ການຊ່ວຍເຫຼືອ. ຜູ້ນຳຕ້ອງການຜູ້ທີ່ຈະຮັບຮູ້ອາການຂອງຄວາມອິດເມື່ອຍແລະທົນສູ້ບໍ່ໄຫວ. ບາງຄັ້ງບາງຄາວພຣະເຈົ້າໃຊ້ຄົນອື່ນເພື່ອຊ່ວຍພວກເຮົາໃຫ້ຮັບຮູ້ຂໍ້ຈຳກັດຂອງພວກເຮົາ. ອາໂຣນແລະຮູເຣບໍ່ພຽງແຕ່ສັງເກດເຫັນບັນຫາ, ແຕ່ພວກເຂົາມີວິທີການໃນການແກ້ໄຂໃນທາງທີ່ເກີດຜົນດີ. ພວກເຂົາໄດ້ເອົາກ້ອນຫີນມາເພື່ອໃຫ້ໂມເຊນັ່ງເທິງນັ້ນ. ມັນເປັນສິ່ງທີ່ຈຳເປັນສຳລັບຜູ້ນຳທີ່ຈະມີເວລາພັກຜ່ອນ. ໂມເຊຕ້ອງການການພັກຜ່ອນນີ້ບໍ່ແມ່ນຍ້ອນລາວບໍ່ຢາກເຮັດວຽກ ແຕ່ຍ້ອນລາວທຳງານໜັກ. ມີບາງຄັ້ງທີ່ຜູ້ນຳຈຳເປັນຕ້ອງ "ນັ່ງລົງ"ແລະພັກຜ່ອນ. ຊີວິດແມ່ນຫຍຸ້ງຍາກ, ການທຳງານແມ່ນເຄັ່ງຄັດ. ຜູ້ນຳຕ້ອງການມີຄົນອື່ນທີ່ຈະຊ່ວຍໃຫ້ພວກເຂົາມີເວລາທີ່ຈະນັ່ງລົງແລະພັກຜ່ອນ, ຫຼືບາງທີອາດຊວ່ຍພວກເຂົາຊອກຫາວິທີແກ້ໄຂບັນຫາເພື່ອຊ່ວຍໃຫ້ວຽກງ່າຍຂຶ້ນ, ບໍ່ແມ່ນຍາກຂຶ້ນ. ອາໂຣນແລະຮູເຣໄດ້ຊ່ວຍໂມເຊໂດຍໄດ້ຈັບແຂນໂມເຊຍົກຂຶ້ນ. ເພື່ອໂຢຊວຍຈະໄດ້ໄຊຊະນະໃນການສູ້ຮົບ. ເປັນຫັຍງພວກເຂົາຈຶ່ງບໍ່ຍອມແພ້? ຄົນໜຶ່ງໃນພວກເຂົາຢູ່ກັບຄົນລະຂ້າງຊ່ວຍໂມເຊຍົກແຂນຂຶ້ນເພື່ອແບກຮັບພາລະບາງສ່ວນ. ຜູ້ຕ້ອງການຜູ້ສນັບສນູນຜູ້ທີ່ຈະຊ່ວຍພວກເຂົາໃນເວລາທີ່ຫຍຸ້ງຍາກແລະແບ່ງປັນຄວາມຮັບຜິດຊອບ. ວຽກງານຫຼາຍໆຢ່າງຕ້ອງການອີກຫຼາຍຄົນໃນການຊ່ວຍເຫຼືອເພື່ອບໍ່ໃຫ້ຜູ້ນຳທໍ້ຖອຍ. ສິດຍາພິບານຂອງທ່ານໄດ້ "ນັ່ງລົງພັກຜ່ອນ" ເມື່ອບໍ່ດົນມານີ້ບໍ່? ພວກຜູ້ນຳກຸ່ມຂອງທ່ານ, ພໍ່ແມ່, ຫຼືຄູ່ສົມຣົດຂອງທ່ານ? ພວກເຂົາມີຄົນຢູ່ອ້ອມຂ້າງເພື່ອຈັບແຂນເມື່ອພວກເຂົາເຈົ້າເມື່ອຍບໍ? ຮຽກຮ້ອງໃຫ້ຜູ້ນຳຂອງທ່ານວາງແຜນສຳລັບການຢຸດພັກ (ພັກຜ່ອນ, ອອກເດີນທາງ, ວັນພັກຜ່ອນ) ເພື່ອຟື້ນຟູແລະໃຫ້ກຳລັງໃຈຕົນເອງສຳລັບສິ່ງທີ່ທ້າທາຍຂ້າງໜ້າແລະກຽມພ້ອມທີ່ຈະກ້າວໄປໃນຂ້າງໜ້າຖ້າພວກເຮົາຕ້ອງການຄວາມຊ່ວຍເຫຼືອເພື່ອເຮັດໃຫ້ມັນເກີດຂຶ້ນ. ສນັບສນູນຢູ່ສເມີເມື່ອຜູ້ນຳອິດເມື່ອຍ.

3. ອົບພະຍົບ 24:13-15

*13. ໂມເຊຈຶ່ງຕຽມຕົວຂຶ້ນໄປເທິງພູຂອງພຣະເຈົ້າພ້ອມກັບໂຢຊວຍຄົນໃຊ້ຂອງຕົນ. 14. ໂມເຊໄດ້ເວົ້າກັບພວກຫົວໜ້າວ່າ "ຈົ່ງລໍຖ້າພວກຂ້າພະເຈົ້າຢູ່ທີ່ນີ້ຈົນເທົ່າກັບມາ ອາໂຣນກັບຮູເຣໄດ້ຢູ່ນຳພວກທ່ານ ຖ້າມີເຣື່ອງຫຍັງເກີດຂຶ້ນ ກໍໃຫ້ໄປຫາທ່ານທັງສອງນີ້ເດີ." 15. ໂມເຊໄດ້ຂຶ້ນໄປເທິງພູແລະມີເມກປົກຫຸ້ມພູນັ້ນຢູ່.*

ບາງຄັ້ງຜູ້ນຳຕ້ອງການການສນັບສນູນຍິ່ງໃຫຍ່ເມື່ອພວກເຂົາບໍ່ຢູ່ນຳ. ການບໍ່ປາກົດຕົວຂອງເຂົາອາດຈະພິສູດວ່າເປັນການທົດສອບທັສນະແລະຄວາມສາມາດຂອງທີມງານໃນການໃຫ້ການສນັບສນູນພວກເຂົາ. ພຣະເຈົ້າໄດ້ເອີ້ນໂມເຊຂຶ້ນໄປເທິງພູ. ດັ່ງນັ້ນພຣະອົງໄດ້ບົ່ງບອກພວກເຂົາເປັນລາຍລັກອັກສອນຂອງກົດລະບຽບແລະພຣະບັນຍັດຂອງພຣະອົງ(ອົບພະຍົບ 24:12) ພຣະເຈົ້າໄດ້ກ່າວ ຄຳສັ່ງຂອງພຣະອົງແລະ ປະຊາຊົນທັງໝົດພວກເຂົາໄດ້ຕົກລົງທີ່ຈະເຊື່ອຟັງ, (ຂໍ້ 4). ໂມເຊໄດ້ພາໂຢຊວຍທີ່ສັດຊື່ໃນການເດີນທາງຂຶ້ນໄປເທິງພູ ຂໍ້ 13). ພວກເຂົາຕ້ອງການເວລານີ້ໃຫ້ຢູ່ຫ່າງຈາກຜູ້ຄົນເພື່ອພວກເຂົາຈະໄດ້ເຂົ້າໃກ້ພຣະເຈົ້າແລະໄດ້ຮັບຄຳແນະນຳທີ່ຊັດເຈນຈາກພຣະເຈົ້າ. ບາງຄັ້ງຜູ້ນຳຕ້ອງອອກໄປຈາກໜ້າທີ່ການງານຢ່າງຮີບດ່ວນເພື່ອສຸມໃສ່ວຽກງານທີ່ມີຄວາມສຳຄັນຫຼາຍກ່ວານັ້ນ. ໂມເຊຍັງໄດ້ໃຊ້ເຫດການນີ້ອອກຈາກການບໍ່ຢູ່ໃນພື້ນທີ່ທຳງານນີ້ເພື່ອໃຫ້ໂອກາດກັບໂຢຊວຍຜູ້ຊ່ວຍຂອງລາວ (ຂໍ້13). ໂຢຊວຍໄດ້ເຄື່ອນຈາກເປັນຜູ້ນຳທະຫານໄປເປັນຜູ້ຊ່ວຍຫຼັກໃນການເປັນຜູ້ນຳປະຊາຊົນຂອງພຣະເຈົ້າ. ກ່ອນໜ້ານີ້ພຣະເຈົ້າຊົງບອກໂມເຊໃຫ້ເວົ້າກັບໂຢຊວຍເຖິງຄຳສັນຍາແລະຄຳທຳນວາຍທີ່ພຣະອົງຊົງເຮັດຂຶ້ນ (ຂໍ້ 14). ຕອນນີ້ໂມເຊຈະໄດ້ໂອກາດທີ່ຈະໃຊ້ເວລາອັນມີຄ່າກັບໂຢຊວຍ

ເທິງພູເຂົາ. ຕົວຢ່າງຂອງໂຢຊວຍໄດ້ເຕືອນພວກເຮົາວ່າຄວາມສັດຊື່ໃນໜ້າທີ່ທີ່ສນັບສນູນສາມາດກະຕຸ້ນພວກເຮົາໃຫ້ມີບົດບາດໃນການທຳໜ້າທີ່ຜູ້ຊ່ວຍຖ້າພວກເຮົາມີຄວາມອົດທົນທີ່ຈະລໍຖ້າແລະຄວາມຖ່ອມຕົວທີ່ຈະຮຽນຮູ້. ຜູ້ນຳແນ່ນອນວ່າ, ຕ້ອງການການສນັບສນູນຜູ້ທີ່ພວກເຂົາເຫັນວ່າສາມາດແນະນຳເພື່ອກາຍເປັນຜູ້ນຳໃນອານາຄົດ. ດັ່ງທີ່ໂມເຊຕ້ອງການວາງມື, ປະຊາຊົນຕ້ອງການຄົນທີ່ຈະມາເປັນຜູ້ນຳໃນເວລາທີ່ບໍ່ມີລາວ, ໃນຂນະທີ່ລາວບໍ່ຢູ່, ໂມເຊຕ້ອງການຄົນເພື່ອຮັບຜິດຊອບໜ້າທີ່ຂອງຕົນ. ນີ້ແມ່ນກ່ຽວຂ້ອງກັບການແກ້ໄຂບັນຫາຂໍ້ຂັດແຍ້ງ. ພາຍໃຕ້ລະບົບການແນະນຳຂອງພໍ່ເຖົ້າຂອງລາວ, ເຢດໂຣ, ໂມເຊໄດ້ແຕ່ງຕັ້ງຜູ້ນຳເພື່ອຕັດສິນປະຊາຊົນ, ໃນຂນະທີ່ລາວຍັງສືບຕໍ່ຈັດການກັບກໍລະນີທີ່ຫຍຸ້ງຍາກ (ອົບພະຍົບ 18:24-26).ໂມເຊບໍ່ສາມາດຮັກສາບົດບາດນັ້ນໃນຂນະທີ່ຢູ່ເທິງພູເຂົາຂອງພຣະເຈົ້າ. ດັ່ງນັ້ນອາໂຣນແລະຮູເຣໄດ້ກ້າວເຂົ້າໄປໃນການທຳໜ້າທີ່ໃນເວລາທີ່ລາວບໍ່ຢູ່ (24:14). ເຊັ່ນດຽວກັບໂຢຊວຍ, ຂອບເຂດຂອງບົດບາດຂອງພວກເຂົາໄດ້ປ່ຽນແປງ. ບໍ່ຄືກັບເມື່ອກ່ອນທີ່ພວກເຂົາຈັບແຂນຂອງໂມເຊແຕ່ຕອນນີ້ພວກເຂົາໄດ້ຍຶດເອົາລະບົບການຕັດສິນຂອງຊົນຊາດ! ຖ້າບໍ່ມີໂມເຊຢູ່ຂ້າງພວກເຂົາ, ພວກເຂົາຈະຕ້ອງອາສັຍບົດຮຽນທີ່ໄດ້ຮຽນມາໃນອາດີດແລະການຊີ້ນຳຂອງພຣະວິນຍານຂອງພຣະເຈົ້າ. ຜູ້ນຳຕ້ອງການຜູ້ສນັບສນູນຜູ້ທີ່ສາມາດກ້າວຂຶ້ນເປັນຜູ້ນຳໃນຂນະທີ່ພວພວກເຂົາບໍ່ຢູ່. ລັກສນະຂອງອາໂຣນແລະຮູເຣຍັງຖືກເປີດເຜີຍໃນຊ່ວງເວລາຂອງໂມເຊ. ໂມເຊບໍ່ໄດ້ກຳນົດເວລາສຳລັບການບໍ່ຢູ່ຂອງລາວ. ອາໂຣນແລະຮູເຣອາດມີຄວາມໜ້າເຊື່ອຖືໃນວຽກຂອງພວກເຂົາຊົ່ວຂນະນຶ່ງ, ແນວໃດກໍ່ຕາມ, ຄວາມປາຖນາຂອງປະຊາຊົນ, ເຖິງແມ່ນວ່າ, ຮູເຣບໍ່ໄດ້ຖືກກ່າວເຖິງໃນຂນະທີ່ປະຊາຊົນນະມັສການຮູບງົວທອງ (ອົບພະຍົບ 32). ຜູ້ນຳຕ້ອງການບຸກຄົນທີ່ມີຄວາມຮູ້ຄວາມສາມາດທີ່ຈະເປັນທີ່ເພິ່ງພາອາສັຍໄດ້ໃນເວລາທີ່ພວກເຂົາຢູ່ຫ່າງໆ, ຂອບພຣະຄຸນພຣະເຈົ້າ, ເມື່ອເວລາທີ່ພວກເຂົາບໍ່ເປັນທີ່ເພິ່ງພາອາສັຍໄດ້, ພຣະເຈົ້າຊົງເປັນທີ່ເພິ່ງໄດ້.

## ນຳໃຊ້ໃນຊີວິດ

ຜູ້ນຳບໍ່ໄດ້ນຳພາໂດຍປາສຈາກການຊ່ວຍເຫຼືອຂອງຄົນອື່ນ. ເລືອກເອົານຶ່ງຂໍ້ຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- ❖ **ປາກົດຕົວ.** ກຳນົດໂອກາດຕ່າງໆທີ່ຈະໜູນໃຈຄົນອື່ນ. ມັນອາດເບິ່ງເໝືອນເປັນເຣື່ອງງ່າຍເຊັ່ນການສເນີຄຳໃຫ້ກຳລັງໃຈແກ່ສິດຍາພິບານຫຼືຜູ້ນຳກຸ່ມຂອງທ່ານ, ແຕ່ວ່າມັນອາດເປັນບາງສິ່ງບາງຢ່າງທີ່ສຳຜັດໄດ້ຫຼາຍ. ໃຫ້ຄົນອື່ນຮູ້ວ່າທ່ານຢູ່ທີ່ນັ້ນສຳລັບພວກເຂົາ.
- ❖ **ໃຫ້ຂອບໃຈ.** ເບິ່ງຮອບໆສຳລັບຜູ້ທີ່ໄດ້ຊ່ວຍທ່ານໃຫ້ໄປເຖິງຈຸດທີ່ທ່ານຢູ່ນີ້, ຂຽນບັດຂອບໃຈໃຫ້ແຕ່ລະຄົນເພື່ອໃຫ້ພວກເຂົາຮູ້ວ່າພວກເຂົາມີຄວາມສຳຄັນຕໍ່ການເດີນທາງຊີວິດຄຣິສະຕຽນຂອງທ່ານ.
- ❖ **ແບ່ງເບົາພາຣະ. ຍັງ**ມີຜູ້ຄົນໃນຊີວິດຂອງທ່ານອີກບໍ່ທີ່ເບິ່ງຄືວ່າມີພາລະໜັກທີ່ຕ້ອງແບກຢູ່ສເມີ? ທ່ານສາມາດສນັບສນູນແລະຈັບມືຖືແຂນພວກເຂົາໄດ້ແນວໃດໃນລະຫ່ວາງວັນແຫ່ງຄວາມຫຍຸ້ງຍາກ? ຊອກຫາໂອກາດທີ່ຈະແບ່ງເບົາພາຣະຂອງພວກເຂົາໂດຍການເອົາວຽກງານອັນນຶ່ງຂອງພວກເຂົາ, ເຖິງແມ່ນວ່າມັນຈະເປັນພຽງຊົ່ວຄາວ.

**ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**